ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 18999 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 08.08.2019.

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວ
# ຂອງກົມການບິນພົນລະເຮືອນ

-ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ295/ນຍ,ລົງວັນທີ04 ກັນຍາ2017

- ອີງຕາມ ການສະເໜີຂອງກົມຈັດຕັ້ງແລະພະນັກງານສະບັບເລກທີ 631/ຍທຂ.ກຈພ, ລົງວັນທີ 05/08/2019

ອີງຕາມ ການເຫັນດີເປັນເອກະພາບຂອງກອງປະຊຸມຄະນະປະຈຳພັກກະຊວງ ຄັ້ງວັນທີ ຄັ້ງວັນທີ 02/08/2019

## ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ,ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງກົມການບິນພົນລະເຮືອນ, ເພື່ອເປັນບ່ອນອີງ ໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມດັ່ງກ່າວ.

### ມາດຕາ 2 ທີ່ຕັ້ງແລະພາລະບົດບາດ

ກົມການບິນພົນລະເຮືອນຂຽນເປັນຕົວອັກສອນຫຍໍ້ວ່າ "ກບພຮ" ເປັນພາສາຝຣັ່ງ Départementde l'aviation Civile Lao DCAL" ແມ່ນໂຄງປະກອບກົງຈັກຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ກະຊວງໃນການຄຸ້ມຄອງມະຫາພາກຄົ້ນຄວ້າ, ວາງແຜນ, ສ້າງ, ຕິດຕາມກວດກາ ແລະ ປັບປຸງ ກົດໝາຍ, ລະບຽບການ, ນິຕິກຳໃຕ້ກົດໝາຍ, ສົນທິສັນຍາ, ສັນຍາສາກົນ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ລວມທັງໂຄສະນາ ແລະ ເຜີຍແຜ່ ໂດຍມີການປະສານສົມທົບກັບບັນດາກົມ ວິຊາການ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານການບິນໃນຂອບເຂດທົ່ວປະເທດ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານການບິນໃຫ້ລະອຽດ, ເລີກເຊິ່ງມີປະສິດທິພາບ ແລະ ປະສິດທິຜົນສູງ;
2. ສ້າງແຜນຍຸດທະສາດ, ນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການລະອຽດໃນແຕ່ລະໄລຍະ ແລະ ຊີ້ນໍາໃນການຈັດຕັ້ງປະຕິບັດ ວຽກງານການບິນ ເພື່ອນໍາສະເໜີຕໍ່ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງ;
3. ຄົ້ນຄວ້າຮ່າງ, ກົດໝາຍ, ລະບຽບການ, ກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກກ່ຽວກັບວຽກງານການບິນ ພ້ອມທັງໂຄສະນາ, ເຜີຍແຜ່ ຢ່າງກວ້າງຂວາງ ທັງພາຍໃນ ແລະ ສາກົນ ລວມທັງຊຸກຍູ້ໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບ ວຽກງານການບິນດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານດ້ານວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີເຂົ້າໃນການພັດທະນາ;
5. ຂຶ້ນແຜນກໍານົດ, ບໍາລຸງ, ກໍ່ສ້າງ, ຊັບຊ້ອນ, ຄຸ້ມຄອງ, ສຶກສາອົບຮົມ ແລະ ສະເໜີ ປະຕິບັດນະໂຍບາຍຕໍ່ພະນັກງານໃນຂະແໜງຕົນໃຫ້ຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລັດຖະບານ;
6. ຂຶ້ນແຜນ, ຄຸ້ມຄອງ ແລະ ນໍາໃຊ້ງົບປະມານ ທີ່ລັດຖະບານອະນຸມັດໃຫ້ມີປະສິດທິຜົນສູງ; ຂຸດຄົ້ນ, ຄຸ້ມຄອງ ແລະ ນໍາໃຊ້ລາຍຮັບວິຊາການ ຕາມການອະນຸມັດຂອງລັດຖະມົນຕີ;
7. ກວດກາ, ກວດການ ແລະ ຄຸ້ມຄອງ ການເຄື່ອນໄຫວຮອບດ້ານຂອງໜ່ວຍວິຊາການ, ໂຄງການທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
8. ກວດກາ, ກວດການ ຕິດຕາມ, ຊຸກຍູ້, ປະເມີນຜົນ ແລະ ຊ່ວຍໜູນກອງວິຊາການ ແລະ ຫົວໜ່ວຍທຸລະກິດການບິນ ໂດຍອີງຕາມກົດໝາຍ, ລະບຽບການ, ຂໍ້ແນະນໍາ, ປຶ້ມຄູ່ມື, ກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ກະຊວງວາງອອກ;
9. ເກັບກໍາ ແລະ ສ້າງຖານຂໍ້ມູນ ສະຖິຕິ ແລະ ຂ່າວສານກ່ຽວກັບການບິນ ພ້ອມທັງສິ່ງເສີມ ຫົວຄິດປະດິດສ້າງ ແລະ ນໍາໃຊ້ຄວາມກ້າວໜ້າທາງດ້ານເຕັກນິກວິຊາການ ແລະ ເຕັກໂນໂລຊີທີ່ເໝາະສົມ ເພື່ອນໍາໃຊ້ເຂົ້າໃນການວາງແຜນ ແລະ ພັດທະນາຂະແໜງຂອງຕົນ;
10. ຢັ້ງຢືນໂຄງປະກອບການຈັດຕັ້ງ, ຕໍາແໜ່ງງານ ແລະ ວຸດທິວິຊາສະເພາະ ຂອງ ກອງວິຊາການ, ບໍລິສັດສາຍການບິນ ແລະ ຜູ້ປະກອບການ ທີ່ກ່ຽວພັນ ດ້ານຄວາມປອດໄພ ແລະ ປ້ອງກັນຄວາມປອດໄພການບິນ;
11. ຄົ້ນຄວ້າ ແລະ ປະກອບຄໍາເຫັນທາງດ້ານວິຊາການກ່ຽວກັບການ ລົງທຶນ, ສ້າງຕັ້ງ ແລະ ສືບຕໍ່ ຫຼື ຫຍຸບເລີກ ຫົວໜ່ວຍ ວິຊາການ ແລະ ທຸລະກິດທີ່ຂຶ້ນກັບຂະແໜງຂອງຕົນ;
12. ຄຸ້ມຄອງການ ສໍາຫຼວດ, ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ສະໜາມບິນ; ຮັບຮອງ, ຂຶ້ນທະບຽນ ແລະ ອະນຸຍາດໃຫ້ກອງວິຊາການ ແລະ ຜູ້ປະກອບການນໍາໃຊ້ສະໜາມບິນ, ເດີ່ນບິນ, ຍານພາຫະນະ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ;
13. ຄຸ້ມຄອງ ມາດຕະຖານເຕັກນິກກ່ຽວກັບ ລະບົບວິທະຍຸການບິນ, ອຸຕຸນິຍົມການບິນ, ລະບົບຂໍ້ມູນຂ່າວສານການບິນ, ແຜນທີ່ທາງອາກາດ ວົງຈອນການບິນຂຶ້ນ-ລົງສະໜາມບິນ, ເດີ່ນບິນ, ການ

ຈະລາຈອນທາງອາກາດ ແລະ ການບໍລິການຕາມມາດຕະຖານ ຄວາມປອດໄພ ການປ້ອງກັນຄວາມປອດໄພ ການບິນ ແລະ ສິ່ງແວດລ້ອມ;

14. ຄຸ້ມຄອງ ມາດຕະຖານເຕັກນິກຂອງ ເຮືອບິນ, ອູ່ສ້ອມແປງ, ເຄື່ອງອາໄຫຼ່, ການສ້ອມແປງ, ການຂົນສົ່ງວັດຖຸອັນຕະລາຍ ແລະ ມາດຕະຖານນໍ້າມັນເຊື້ອໄຟເຮືອບິນ, ພ້ອມທັງຮັບຮອງມາດຕະຖານຂອງສະຖາບັນການບິນ ແລະ ສູນຝຶກການບິນ;
15. ປະສານສົມທົບກັບ ສາຍການບິນ ແລະ ພາກສ່ວນກ່ຽວຂ້ອງວາງແຜນພັດທະນາຕະຫຼາດການບິນ, ວາງຂອບສິດທິການບິນ ແລະ ເຮັດສັນຍາຂົນສົ່ງທາງອາກາດ ເພື່ອຂະຫຍາຍຕາໜ່າງ ດ້ານການຂົນສົ່ງທາງອາກາດກັບພາກພື້ນ ແລະ ສາກົນ;
16. ຄຸ້ມຄອງ ແລະ ກຳນົດມາດຕະຖານການປົກປັກຮັກສາສິ່ງແວດລ້ອມ ກ່ຽວກັບ ສະໜາມບິນສີຂຽວພະລັງງານທົດແທນ, ຄວາມສັ່ນສະເທືອນ, ການບຳບັດນໍ້າເປື້ອນ ແລະ ສິ່ງເສດເຫຼືອ, ມົນລະພິດທາງອາກາດ ແລະ ສຽງ, ນໍ້າຢາລ້າງເຮືອບິນ, ໂຟມມອດໄຟ, ສານເຄມີແຫ້ງ ແລະ ອື່ນໆ;
17. ເປັນໃຈກາງປະສານງານກ່ຽວກັບ ການອະນຸຍາດບໍລິການຖ້ຽວບິນພິເສດ ເພື່ອຮັບປະກັນຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ;
18. ຕິດຕາມກວດກາ ການປະຕິບັດງານຂອງກອງວິຊາການ, ບໍລິສັດສາຍການບິນ ແລະ ຜູ້ປະກອບການກ່ຽວກັບຄວາມປອດໄພ, ການ ປ້ອງກັນຄວາມປອດໄພການບິນ, ຮັກສາສິ່ງແວດລ້ອມ, ລົງທຶນ, ບູລະນະຮັກສາ, ສ້ອມແປງ ແລະ ນຳໃຊ້ໂຄງລ່າງສະໜາມບິນ ໃຫ້ໄດ້ຕາມມາດຕະຖານຂອງອົງການການບິນພົນລະເຮືອນສາກົນ;
19. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີ, ຕາມກົດໝາຍ ແລະ ລະບຽບການກຳນົດ.

## ມາດຕາ 4 ຂອບເຂດສິດ

1. ສະເໜີ ສ້າງຕັ້ງ, ປັບປຸງ ຫຼື ລົບລ້າງ ໂຄງປະກອບກົງຈັກ ແລະ ຕຳແໜ່ງງານ ທີ່ຂຶ້ນກັບ ສິດຄຸ້ມຄອງຂອງຕົນເພື່ອໃຫ້ສອດຄ່ອງກັບໜ້າທີ່ວຽກງານທີ່ຮັບຜິດຊອບ ໃນແຕ່ລະໄລຍະ;
2. ສະເໜີ ສ້າງ ແລະ ປັບປຸງ ກົດໝາຍ ແລະ ລະບຽບການ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ເຫັນວ່າບໍ່ສອດຄ່ອງ ພ້ອມທັງສະເໜີຂັ້ນເທິງອອກແຈ້ງການ ແລະ ຄຳແນະນຳ ຕໍ່ ຜູ້ປະກອບການດ້ານການບິນ ແລະ ເຈົ້າໜ້າທີ່ຂະແໜງການອື່ນທີ່ກ່ຽວຂ້ອງ;
3. ສະເໜີແຕ່ງຕັ້ງ, ສັບຊ້ອນ, ເລື່ອນຊັ້ນ, ຍ້ອງຍໍ, ຍົກຍ້າຍ, ປະຕິບັດວິໄນ, ປົດຕຳແໜ່ງ ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນບົນພື້ນຖານເຫັນດີ ເປັນເອກະພາບ ຂອງກົມຈັດຕັ້ງ ແລະ ພະນັກງານ;
4. ພົວພັນ, ປະສານສົມທົບກັບ ທຸກອົງການຈັດຕັ້ງ ຂອງພັກ ແລະ ລັດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ດຳລັດ ແລະ ລະບຽບການຂອງລັດພ້ອມທັງ ເຊີນພາກສ່ວນທີ່ກ່ຽວຂ້ອງມາປຶກສາຫາລື ກ່ຽວກັບວຽກງານການບິນພົນລະເຮືອນ;
5. ກວດກາ ແລະ ກວດການ ການເຄື່ອນໄຫວຮອບດ້ານ ຂອງບັນດາພະແນກ,ໂຄງການ, ຫົວໜ່ວຍ ວິຊາການ ພ້ອມທັງຕິດຕາມຫົວໜ່ວຍທຸລະກິດການບິນພົນລະເຮືອນ ແລະ ຜູ້ປະກອບການອື່ນໆ;
6. ອອກ ໃບອະນຸຍາດໃຫ້ຈູບິນ, ນັກບັນຊາ, ນາຍຊ່າງສ້ອມແປງ ແລະ ອາຫານບໍລິການຜູ້ໂດຍສານ;
7. ຮັບຮອງ, ຕໍ່ ແລະ ເພີກຖອນ ໃບອະນຸຍາດການຂົນສົ່ງທາງອາກາດ, ໃບທະບຽນເຮືອບິນ, ໃບທະບຽນສະໜາມບິນ ແລະ ໃບທະບຽນສູນບັນຊາການຈະລາຈອນທາງອາກາດ;

8. ພົວພັນ, ເຈລະຈາ, ເຊັນສັນຍາ, ອະນຸສັນຍາສາກົນ ຫຼື ຂໍ້ຜູກພັນກັບພາກສ່ວນຕ່າງໆ ຢູ່ ພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງລັດຖະມົນຕີ;
9. ນຳໃຊ້ ງົບປະມານ, ວັດຖຸປະກອນ, ເຄື່ອງມື ແລະ ຍານພາຫະນະ ຕາມການອະນຸມັດຂອງກະຊວງໂຍທາທິການ ແລະ ຂົນສົ່ງ;
10. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ລວມທັງຜົນສຳເລັດທາງດ້ານ ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳ;
11. ປະຕິບັດສິດອື່ນຕາມການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີ, ຕາມກົດໝາຍ ແລະ ລະບຽບການກຳນົດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມການບິນພົນລະເຮືອນ ປະກອບມີ:

1. ພະແນກ ຈັດຕັ້ງ-ບໍລິຫານ;
2. ພະແນກ ແຜນການ-ງົບປະມານ;
3. ພະແນກ ກວດກາ;
4. ພະແນກ ຂົນສົ່ງທາງອາກາດ;
5. ພະແນກ ມາດຕະຖານການບິນ;
6. ພະແນກ ມາດຕະຖານສະໜາມບິນ;
7. ພະແນກ ປ້ອງກັນຄວາມປອດໄພການບິນ;
8. ພະແນກ ມາດຕະຖານຈະລາຈອນທາງອາກາດ.

**ມາດຕາ 6 ໂຄງປະກອບບຸກຄະລະກອນ**

1. ຫົວໜ້າກົມການບິນພົນລະເຮືອນ ຈຳນວນ 1 ທ່ານ ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ ຜູ້ຊີ້ນຳກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມ;

   ໃນເວລາຕິດຂັດຫົວໜ້າກົມຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງເປັນຜູ້ຮັກສາການແທນ;
2. ຮອງຫົວໜ້າກົມຈຳນວນໜຶ່ງ, ຊ່ວຍຫົວໜ້າກົມ ໃນການຊີ້ນຳຂົງເຂດວຽກງານໃດໜຶ່ງຕາມການແບ່ງງານ ແລະ ຕາມການມອບໝາຍ, ຮັບຜິດຊອບຕໍ່ຫົວໜ້າກົມກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງຂົງເຂດວຽກງານ ທີ່ຕົນຊີ້ນຳ;
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການກຳນົດ.

## ໝວດທີ 4
### ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ພະແນກຈັດຕັ້ງ-ບໍລິຫານ**

1. ຄົ້ນຄວ້າແລະ ປັບປຸງໂຄງປະກອບກົງຈັກ, ຂຶ້ນແຜນກໍານົດ, ບໍາລຸງ-ຍົກລະດັບ, ສັບຊ້ອນ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ;
2. ຄຸ້ມຄອງວຽກບໍລິຫານ, ພິທີການ, ສາລະບັນ ແລະ ເລຂານຸການ;
3. ຄຸ້ມຄອງສິ່ງປຸກສ້າງ, ຊັບສິນ, ຍານພາຫະນະ, ວັດຖຸປະກອນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ, ເປັນເຈົ້າການໃນການ ຈັດຊື້-ຈັດຈ້າງ, ຊຸກຍູ້ ແລະ ຕິດຕາມການຊໍາລະສະສາງໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ກໍານົດຢ່າງເປັນລະບົບຕໍ່ເນື່ອງ;
4. ສະຫຼຸບສັງລວມ ການຈັດຕັ້ງປະຕິບັດທຸກວຽກງານພາຍໃນກົມປະຈໍາ ເດືອນ, ງວດ ແລະ ປີຢ່າງເປັນປົກກະຕິ;
5. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະພັກ ຄະນະກົມ.

**ມາດຕາ 8 ພະແນກ ແຜນການ-ງົບປະມານ**

1. ເປັນໃຈກາງປະສານງານຮ່າງແຜນຍຸດທະສາດ, ແຜນແມ່ບົດ, ແຜນການ ແລະ ການຮ່ວມມື ກ່ຽວກັບການພັດທະນາຂະແໜງການບິນພົນລະເຮືອນ;
2. ຂຶ້ນແຜນວຽກ, ແຜນງົບປະມານກໍ່ສ້າງໂຄງລ່າງພື້ນຖານ, ພ້ອມທັງຕິດຕາມກວດກາ, ປະເມີນຜົນການການນໍາໃຊ້ງົບປະມານຂອງ ບັນດາໂຄງການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
3. ສັງລວມ ຂໍ້ມູນສະຖິຕິ ແລະ ຂ່າວສານ ກ່ຽວກັບວຽກງານການບິນພົນລະເຮືອນ ໃນຂອບເຂດທົ່ວປະເທດ;
4. ຄຸ້ມຄອງການປະຕິບັດແຜນລາຍຮັບ-ລາຍຈ່າຍ, ໜີ້ສິນ, ຄ່າທານຽມ, ຄ່າບໍລິການ ແລະ ມອບເຂົ້າຄັງເງິນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ຄຸ້ມຄອງ ບັນຊີ-ການເງິນ, ງົບປະມານບໍລິຫານ ແລະ ບັນດາໂຄງການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
6. ສະຫຼຸບ, ຕີລາຄາການຈັດຕັ້ງປະຕິບັດ, ຖອດຖອນບົດຮຽນ, ວາງມາດຕະການແກ້ໄຂ ແລະ ລາຍງານຜົນໃຫ້ຫົວໜ້າກົມ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
7. ສະຫຼຸບສັງລວມການຈັດຕັ້ງປະຕິບັດວຽກງານຂອງຕົນປະຈໍາເດືອນ, ງວດ ແລະ ປີຢ່າງເປັນປົກກະຕິ;
8. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ພະແນກກວດກາ**

1. ຕິດຕາມກວດກາ ແລະ ກວດການ ການເຄື່ອນໄຫວຮອບດ້ານ ຂອງບັນດາພະແນກ, ຫົວໜ່ວຍວິຊາການ ແລະ ໂຄງການ ທີ່ຂຶ້ນກັບກົມ;
2. ຕິດຕາມກວດກາ ການປະມູນຈັດຊື້-ຈັດຈ້າງ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງບັນດາພະແນກ ແລະ ໂຄງການ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ;
3. ຄົ້ນຄວ້າ ແລະ ສະເໜີວິທີການ ແລະ ມາດຕະການໃນການແກ້ໄຂ ຕໍ່ຂໍ້ສະເໜີ ແລະ ຄໍາຮ້ອງຟ້ອງ ກ່ຽວກັບ ວຽກງານ ແລະ ການກະທໍາຂອງພະນັກງານ-ລັດຖະກອນ ພາຍໃນກົມ;

4. ປະສານສົມທົບກັບພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ກວດກາ ແລະ ກວດການ ການເຄື່ອນໄຫວທາງດ້ານວິຊາການ ຂອງຂະແໜງສາຍຕັ້ງ ແລະ ຫົວໜ່ວຍທຸລະກິດ ໃນ ຂະແໜງຕົນ;
5. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ພະແນກ ຂົນສົ່ງທາງອາກາດ**

1. ຄົ້ນຄວ້າ, ເຈລະຈາ ສັນຍາຂົນສົ່ງທາງອາກາດສອງຝ່າຍ ແລະ ຫຼາຍຝ່າຍ ໂດຍສອດຄ່ອງກັບ ນະໂຍບາຍຂອງລັດຖະບານ;
2. ເກັບກຳ ແລະ ວິໄຈ ຂໍ້ມູນສະຖິຕິການຂົນສົ່ງທາງອາກາດ;
3. ຄົ້ນຄວ້າການແບ່ງປັນຕະຫຼາດການບິນຂອງ ສາຍການບິນພາຍໃນ ແລະ ຕ່າງປະເທດ;
4. ຄົ້ນຄວ້າ ການ ອະນຸຍາດ ຢຸດຕິ, ເພີກຖອນ ຫຼື ຍົກເລີກການດຳເນີນທຸລະກິດກ່ຽວກັບການບິນພົນລະເຮືອນ;
5. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນະໂຍບາຍຂົນສົ່ງທາງອາກາດ, ລະບຽບ ວ່າດ້ວຍ ການຄຸ້ມຄອງ ການຂົນສົ່ງທາງອາກາດ ແລະ ທຸລະກິດການບິນພົນລະເຮືອນ;
6. ຄົ້ນຄວ້າ ການອະນຸຍາດ ຖ້ຽວບິນ (ຂຶ້ນ-ລົງ) ພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງ ຕາມສັນຍາຂົນສົ່ງທາງອາກາດ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
7. ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ ຂອງບັນດາ ສາຍການບິນ ແລະ ຫົວໜ່ວຍທຸລະກິດການບິນພົນລະເຮືອນ;
8. ພົວພັນ ແລະ ປະສານສົມທົບກັບບັນດາພາກສ່ວນຕ່າງໆ ທັງພາຍໃນ, ຕ່າງປະເທດ ແລະ ສາກົນ ໃນການສະໜັບສະໜູນທຶນ, ແລກປ່ຽນບົດຮຽນທາງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ພັດທະນາບຸກຄະລາກອນ ໃນຂະແໜງການບິນພົນລະເຮືອນ;
9. ເປັນໃຈກາງປະສານງານກັບພະແນກການທີ່ກ່ຽວຂ້ອງ ໃນການສ້າງ, ປັບປຸງ, ເຜີຍແຜ່ ແລະ ຕິດຕາມການຈັດຕັ້ງປະຕິບັດ ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ພະແນກມາດຕະຖານການບິນ**

1. ຄົ້ນຄວ້າ ສ້າງ ແລະ ປັບປຸງລະບຽບການ ແລະ ຄູ່ມືຄຸ້ມຄອງມາດຕະຖານເຕັກນິກການບິນ;
2. ຕິດຕາມ ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກການບິນ ແລະ ເຕັກນິກສົມບູນຂອງເຮືອບິນ;
3. ກວດກາ ແລະ ຢັ້ງຢືນມາດຕະຖານຂອງຜູ້ດຳເນີນການຂົນສົ່ງທາງອາກາດ, ອູ່ສ້ອມແປງເຮືອບິນ ແລະ ສະຖາບັນ/ສູນຝຶກການບິນ;
4. ຄົ້ນຄວ້າ ອອກ, ຕໍ່ ຫຼື ເພີກຖອນ ໃບທະບຽນເຮືອບິນ, ໃບຢັ້ງຢືນເຕັກນິກຄວາມສົມບູນຂອງເຮືອບິນ ແລະ ໃບຢັ້ງຢືນມາດຕະຖານສຽງຂອງເຮືອບິນ;
5. ຄົ້ນຄວ້າ ອອກ, ຕໍ່ ຫຼື ເພີກຖອນ ໃບອະນຸຍາດປະຕິບັດໜ້າທີ່ຂອງ ນັກບິນ, ວິສະວະກອນ, ນາຍຊ່າງ ແລະ ພະນັກງານທີ່ອຳນວຍຄວາມສະດວກຖ້ຽວບິນ;
6. ອອກ ແລະ ຄຸ້ມຄອງ ໃບອະນຸຍາດປະຕິບັດໜ້າທີ່ ຂອງພະນັກງານການບິນພົນລະເຮືອນ;
7. ຄົ້ນຄວ້າ ແລະ ຢັ້ງຢືນປຶ້ມຄູ່ມືຂອງບໍລິສັດສາຍການບິນໃນການປະຕິບັດການບິນ, ການສ້ອມແປງເຮືອບິນ, ຝຶກອົບຮົມ ແລະ ຂົນສົ່ງວັດຖຸອັນຕະລາຍ;

8. ເຝົ້າລະວັງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ໃຫ້ຄຳແນະນຳ ກ່ຽວກັບມາດຕະຖານຄວາມປອດໄພການບິນໃຫ້ແກ່ຜູ້ປະກອບການຂົນສົ່ງທາງອາກາດ, ອູ່ສ້ອມແປງເຮືອບິນ ແລະ ສະຖາບັນ/ສູນຝຶກການບິນ;
9. ຄົ້ນຄວ້າປະຕິບັດມາດຕະການເພີກຖອນໃບອະນຸຍາດປະຕິບັດໜ້າທີ່, ໃບອະນຸຍາດ ຂອງຜູ້ດຳເນີນການຂົນສົ່ງທາງອາກາດ, ໃບທະບຽນເຮືອບິນ, ໃບຢັ້ງຢືນເຕັກນິກຄວາມສົມບູນຂອງເຮືອບິນ ແລະ ໃບຢັ້ງຢືນມາດຕະຖານສຽງຂອງເຮືອບິນ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

ມາດຕາ 12 ພະແນກມາດຕະຖານສະໜາມບິນ

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງລະບຽບການ ແລະ ຄູ່ມືຄຸ້ມຄອງມາດຕະຖານສະໜາມບິນ;
2. ຄົ້ນຄວ້າ, ກຳນົດ ມາດຕະຖານເຕັກນິກ, ກຳນົດໝາຍເຕັກນິກກ່ຽວກັບ ການກໍ່ສ້າງ, ປັບປຸງບູລະນະສ້ອມແປງສະໜາມບິນ, ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກອື່ນໆ;
3. ກວດກາ ແລະ ຢັ້ງຢືນມາດຕະຖານຂອງຜູ້ໃຫ້ບໍລິການສະໜາມບິນ;
4. ຄົ້ນຄວ້າການ ອອກ, ຕໍ່ ຫຼື ເພີກຖອນ ໃບທະບຽນ ແລະ ໃບຢັ້ງຢືນ ສະໜາມບິນ;
5. ຄົ້ນຄວ້າການ ອອກ, ຕໍ່ ຫຼື ເພີກຖອນ ໃບອະນຸຍາດການປະຕິບັດໜ້າທີ່ຂອງພະນັກງານບໍລິການພາກພື້ນດິນ;
6. ຄົ້ນຄວ້າ ແລະ ຢັ້ງຢືນ ປຶ້ມຄູ່ມືຄຸ້ມຄອງຄວາມປອດໄພຂອງຜູ້ໃຫ້ບໍລິການສະໜາມບິນ;
7. ເຝົ້າລະວັງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ໃຫ້ຄຳແນະນຳ ກ່ຽວກັບການຄຸ້ມຄອງມາດຕະຖານຄວາມປອດໄພຂອງສະໜາມບິນ;
8. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

ມາດຕາ 13 ພະແນກ ປ້ອງກັນຄວາມປອດໄພການບິນ

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງລະບຽບການ ແລະ ຄູ່ມືຄຸ້ມຄອງການປ້ອງກັນຄວາມປອດໄພການບິນ;
2. ຕິດຕາມ, ກວດກາ, ທົດສອບ ແລະ ຢັ້ງຢືນ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມປອດໄພການບິນຂອງຜູ້ໃຫ້ການບໍລິການ ຄູຝຶກ, ນັກກວດກາ, ນັກກວດສອບ ແລະ ນັກວິເຄາະພາບ ລວມທັງອຸປະກອນ ຕາມມາດຕະຖານທີ່ກຳນົດໄວ້;
3. ຄົ້ນຄວ້າ ອອກ, ຕໍ່ ຫຼື ເພີກຖອນ ໃບຢັ້ງຢືນຄຸນວຸດທິຂອງ ຄູຝຶກ, ນັກກວດກາ, ນັກກວດສອບ ແລະ ນັກວິເຄາະພາບ ພ້ອມທັງຢັ້ງຢືນຄຸນນະພາບຂອງອຸປະກອນການປ້ອງກັນຄວາມປອດໄພການບິນຕາມລະບຽບການທີ່ກຳນົດໄວ້;
4. ກວດກາມາດຕະຖານຂອງສະຖາບັນ, ສູນຝຶກການບິນກ່ຽວກັບການປ້ອງກັນຄວາມປອດໄພການບິນ;
5. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງແຜນການ ແລະ ປຶ້ມຄູ່ມືຂອງຜູ້ໃຫ້ການບໍລິການ ແລະ ຜູ້ປະກອບການກ່ຽວກັບການປ້ອງກັນຄວາມປອດໄພການບິນ;
6. ເຝົ້າລະວັງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ແນະນຳ ການຈັດຕັ້ງປະຕິບັດ ການປ້ອງກັນຄວາມປອດໄພການບິນ ຂອງຜູ້ໃຫ້ບໍລິການ ແລະ ຜູ້ປະກອບການ;
7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

ມາດຕາ 14 ພະແນກ ມາດຕະຖານຈະລາຈອນທາງອາກາດ

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ ແລະ ປຶ້ມຄູ່ມືກ່ຽວກັບການຄຸ້ມຄອງວຽກການຈະລາຈອນທາງອາກາດ ແລະໂທລະຄົມການບິນ;
2. ຄົ້ນຄວ້າ ວາງແຜນ ພັດທະນາໂຄງສ້າງພື້ນຖານເຄືອຄ່າຍໂທລະຄົມການບິນ ແລະ ສິ່ງອໍານວຍຄວາມສະດວກການບິນອື່ນໆ;
3. ຄົ້ນຄວ້າ ສ້າງ ແລະ ປັບປຸງ ເສັ້ນທາງບິນ ພາຍໃນ, ສາກົນ ລວມທັງເຂດນ່ານຟ້າທີ່ໃຊ້ສໍາລັບການ ບິນພົນລະເຮືອນ;
4. ຈັດລະບຽບ ແລະກໍານົດມາດຕະຖານເຕັກນິກກ່ຽວກັບ ການຄຸ້ມຄອງການຈະລາຈອນທາງອາກາດ ແລະ ໂທລະຄົມການບິນພ້ອມທັງ ຕິດຕາມກວດກາ ແລະ ກວດສອບ ການດໍາເນີນງານຂອງ ຜູ້ປະກອບການ ແລະ ຜູ້ໃຫ້ບໍລິການ;
5. ຕິດຕາມ, ກວດກາ ແລະ ຢັ້ງຢືນມາດຕະຖານ ຂອງຜູ້ປະກອບການ, ຜູ້ໃຫ້ບໍລິການ ດ້ານການຈະລາຈອນທາງອາກາດແລະໂທລະຄົມການບິນ, ຂ່າວສານການບິນ, ການຊອກຄົ້ນ ແລະ ກູ້ໄພການບິນ, ອອກແບບວົງຈອນບິນ ແລະ ແຜນທີ່ການບິນ;
6. ຄົ້ນຄວ້າ ອອກ, ຕໍ່ ຫຼື ເພີກຖອນ ໃບອະນຸຍາດ, ໃບຢັ້ງຢືນ ການນໍາໃຊ້ເຄື່ອງອຸປະກອນລະບົບວິທະຍຸການບິນ, ອຸຕຸການບິນ ແລະ ສິ່ງອໍານວຍຄວາມສະດວກອື່ນໆໃຫ້ຜູ້ບໍລິການສ້ອມແປງ, ຜູ້ສະໜອງອາໄຫຼ່ ແລະ ຊິ້ນສ່ວນເຕັກນິກຕ່າງໆ;
7. ຄົ້ນຄວ້າ ອອກ, ຕໍ່ ຫຼື ເພີກຖອນ ໃບອະນຸຍາດປະຕິບັດໜ້າທີ່ຂອງ ວິສະວະກອນ, ນາຍຊ່າງ, ວິຊາການບັນຊາຈະລາຈອນທາງອາກາດ, ຂ່າວສານການບິນ, ອອກແບບວົງຈອນບິນ ແລະ ແຜນທີ່ການບິນທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງອາກາດ ແລະ ໂທລະຄົມການບິນ;
8. ຄົ້ນຄວ້າ, ມີຄໍາເຫັນ ແລະ ຢັ້ງຢືນ ປຶ້ມຄູ່ມືການ ນໍາໃຊ້, ສ້ອມແປງ, ບໍາລຸງຮັກສາ, ບໍລິການຈະລາຈອນທາງອາກາດ, ຂ່າວສານການບິນ, ຊອກຄົ້ນ ແລະ ກູ້ໄພການບິນ, ອອກແບບວົງຈອນບິນ ແລະ ແຜນທີ່ການບິນ ລວມທັງ ຫຼັກສູດຝຶກອົບຮົມດ້ານການຈະລາຈອນທາງອາກາດ ແລະ ໂທລະຄົມການບິນ;
9. ຄົ້ນຄວ້າ, ມີຄໍາເຫັນ ກ່ຽວກັບ ການອອກອະນຸຍາດ ບິນຜ່ານ ແລະ ລົງຈອດສະໜາມບິນ ໃນ ສປປ ລາວ ໃຫ້ບັນດາສາຍການບິນທີ່ບິນ ຕາມແຜນ ແລະ ນອກແຜນ;
10. ປະສານງານກັບກົມອຸຕຸນິຍົມ ແລະ ອຸທົກກະສາດ ກ່ຽວກັບ ວຽກອຸຕຸການບິນ;
11. ດໍາເນີນການ ສືບສວນ-ສອບສວນ ເຫດຕິດຂັດຕາມຄວາມຮັບຜິດຊອບຂອງຕົນ;
12. ຕິດຕາມກວດກາ ຊຸກຍູ້ ແລະ ໃຫ້ຄໍາແນະນໍາ ດ້ານມາດຕະຖານຄວາມປອດໄພການບິນໃຫ້ແກ່ຜູ້ປະກອບການ ແລະ ຜູ້ໃຫ້ບໍລິການດ້ານ ການຈະລາຈອນທາງອາກາດແລະໂທລະຄົມການບິນ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5

### ຫຼັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 18 ຫຼັກການ

ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ ພ້ອມທັງມອບສິດ

ແລະ ຄວາມຮັບຜິດຊອບໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ;

### ມາດຕາ 19 ແບບແຜນວິທີເຮັດວຽກ

1. ທຸກການເຄື່ອນໄຫວວຽກງານຂອງກົມແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງກະຊວງ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະໂຄງການລະອຽດ, ມີການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະມີເປົ້າໝາຍໃນແຕ່ລະໄລຍະ;
3. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳເດືອນ, ງວດ ແລະ ປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້, ຕິດຕາມ ແລະ ກວດກາປະເມີນຜົນ, ເກັບກຳສະພາບລວມ ແລະ ສະເພາະດ້ານຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ລັດຖະມົນຕີກະຊວງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 20 ງົບປະມານ, ຕາປະທັບ, ເຄື່ອງແບບ ແລະ ກາໝາຍ

ກົມການບິນພົນລະເຮືອນ ມີ ງົບປະມານ, ຕາປະທັບ, ເຄື່ອງແບບ ແລະ ກາໝາຍຊັ້ນຂັ້ນເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

### ມາດຕາ21 ການຈັດຕັ້ງປະຕິບັດ

ກົມການບິນພົນລະເຮືອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ22 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງສະບັບເລກທີ 15702/ຍທຂ, ລົງວັນທີ 01/09/2014.

ລັດຖະມົນຕີ
ກະຊວງໂຍທາທິການ ແລະ ຂົນສົ່ງ

ດຣ ບຸນ[illegible]ະວົງ